# ບ່ອນຄົ້ນຫາສູນບໍລິການສຸຂະພາບລາຄາຖືກ ຫຼື ການປະກັນໄພສຸຂະພາບ

## ຄົ້ນຫາການບໍລິການສຸຂະພາບລາຄາຖືກ

- **Bridge to Benefits: MN Low-Cost Health Care Directory**
  **ການເຊື່ອມໂຍງເຖິງຜົນປະໂຫຍດທີ່ໄດ້ຮັບ: ບັນຊີລາຍຊື່ສູນບໍລິການການດູແລສຸຂະພາບຕົ້ນທຶນຕໍ່າ MN)**
  (www.bridgetobenefits.org/MN_Low_Cost_Health_Care_Directory)
  ໃສ່ຂໍ້ມູນຄາວຕີ້ຂອງທ່ານເພື່ອຊອກຫາລາຍຊື່ຄລີນິກລາຄາຖືກທີ່ຢູ່ໃກ້ທ່ານ.

- **Minnesota Association of Community Health Centers (MNACHC)**
  **ສະມາຄົມສູນສຸຂະພາບຊຸມຊົນມິນນິໂຊຕ້າ (MNACHC)**
  (https://mnachc.org/community-health-centers/find-a-health-center/)
  ນໍາໃຊ້ແຜ່ນທີ່ ຫລື ໃຫ້ຂໍ້ມູນສະຖານທີ່ຂອງທ່ານເພື່ອຊອກຫາສູນຂໍ້ມູນສຸຂະພາບ (ສູນສຸຂະພາບທີ່ໄດ້ຮັບການຮັບຮອງຈາກລັດບານກາງ) ທີ່ຢູ່ໃກ້ທ່ານ.
  ສູນສຸຂະພາບຂອງຊົມຊົນໃຫ້ການບໍລິການປິ່ນປົວສຸຂະພາບ, ປົວແຂ້ວ, ແລະ ສຸຂະພາບການປະພຶດໃຫ້ແກ່ຜູ້ທີ່ມີຂໍ້ຈໍາກັດດ້ານການປິ່ນປົວສຸຂະພາບ.

## ຄົ້ນຫາປະກັນສຸຂະພາບ

- **MNsure Apply and Enroll for insurance**
  **ເມັນເອັນຊົວ (MNsure) ສະໝັກ ແລະ ລົງທະບຽນປະກັນໄພ**
  (www.mnsure.org/new-customers/apply/index.jsp)
  ທ່ານສາມາດສະໝັກການປະກັນໄພໄດ້ເຊັ່ນ: ການຊ່ວຍເຫຼືອດ້ານການປິ່ນປົວສຸຂະພາບ ແລະ ສູນປິ່ນປົວມິນນີໂຊຕາ (MinnesotaCare), ທາງອອນລາຍ ຫລື ລົງທະບຽນພົບຊ່ຽວຊານເພື່ອໃຫ້ການຊ່ວຍເຫຼືອແກ່ທ່ານ. ຜູ້ທີ່ຢູ່ລັດມິນນີໂຊຕາທີ່ລົງທະບຽນຜ່ານ MNsure ມີຄຸນສົມບັດໄດ້ຮັບການຊ່ວຍເຫຼືອດ້ານການເງິນ.

- **MNsure Navigators**
  **ຜູ້ນໍາທາງ MNsure**
  (https://www.mnsure.org/help/find-assister/find-navigator.jsp)
  ນັກນໍາທາງສາມາດຊ່ວຍທ່ານລົງທະບຽນໃນການຊ່ວຍເຫຼືອດ້ານການປິ່ນປົວສຸຂະພາບ ຫລື ສູນດູແລສຸຂະພາບມິນີໂຊຕາ (MinnesotaCare) (ຖ້າທ່ານໄດ້ຮັບສິດ).
  ພວກເຂົາຍັງສາມາດຊ່ວຍທ່ານໃນການລົງທະບຽນໃນແຜນປະກັນໄພສ່ວນບຸກຄົນ ແລະ ສະໜອງການຮຽນຮັກສາປະກັນສຸຂະພາບຂັ້ນພື້ນຖານ.
  ນັກນໍາທາງຫຼາຍທ່ານຢູ່ໃນອົງການຊຸມຊົນ ແລະ ສະເໜີການຊ່ວຍເຫຼືອໃນການແປພາສາເປັນຕົ້ນແມ່ນພາສາຈີນ, ໂຊມາເລຍ, ສະເປນ, ມົ້ງ ແລະ ຫວຽດນາມ.

- **Hospital Presumptive Eligibility Program**
  **ໂປແກຣມສິດຄວາມເປັນໄປໄດ້ກ່ຽວກັບໂຮງໝໍ**
  (https://mn.gov/dhs/partners-and-providers/policies-procedures/minnesota-health-care-programs/provider/hpe/)
  ທ່ານສາມາດສະໝັກຂໍການຊ່ວຍເຫຼືອດ້ານການດູແລສຸຂະພາບ (Medical Assistance) ຫຼື ມິນີໂຊຕາແຄ໌ (MinnesotaCare) ໃນເວລາທີ່ທ່ານຢູ່ໂຮງໝໍ. ຖ້າທ່ານໄດ້ຕາມເງື່ອນໄຂ, ທ່ານສາມາດໄດ້ຮັບການຄຸ້ມຄອງການບໍລິການກ່ອນຈະສໍາເລັດການສະໝັກຂໍ.

## ຊອກຫາການບໍລິການດ້ານສຸຂະພາບເພີ່ມເຕີມ

- **Local Health Departments and Community Health Boards**
  **ພະແນກສາທາລະນະສຸກປະຈໍາທ້ອງຖິ່ນ ແລະ ຄະນະກໍາມະການສາທາລະນະສຸກຂອງຊຸມຊົນ**
  (https://www.health.state.mn.us/communities/practice/connect/findlph.html)
  ຕິດຕໍ່ຫາພະແນກສາທາລະນະສຸກທ້ອງຖິ່ນ ແລະ/ຫຼື ຄະນະກໍາມະການສາທາລະນະສຸກຂອງຊຸມຊົນໃນຄາວຕີ້ຂອງທ່ານ ເພື່ອຊອກຄໍາແນະນໍາ ແລະ ສອບຖາມກ່ຽວກັບການບໍລິການຕ່າງໆທີ່ທ່ານອາດຈະໄດ້ຮັບສິດ.

Minnesota Department of Health
625 Robert St. N., PO Box 64975
St. Paul, MN 55164-0975
651-201-5414
www.health.state.mn.us

02/13/2020

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-5414.*